**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ເມືອງສາລະວັນ

ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງ.

ເລກທີ..010.../ພບຕ

ສາລະວັນ, ວັນທີ..04.03..2026

## ໜັງສືແຈ້ງການເຊີນ
## ເຂົ້າຮ່ວມປະມູນ(ຈັດຊື້-ຈັດຈ້າງ).

ເຖິງ: ບໍລິສັດ ຮັບເໝົາກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ຢູ່ພາຍໃນ ແລະ ຕ່າງແຂວງ ທີ່ນັບຖື.

ເລື່ອງ: ປະກາດແຈ້ງການເຊີນເຂົ້າຮ່ວມການປະມູນ (ຈັດຊື້-ຈັດຈ້າງ) ຟື້ນຟູ ສ້ອມແປງທາງດິນແດງປະສົມຫີນທາດ ຈຳນວນລວງຍາວ 8.47 Km, ກ້ວາງ 5 m, 6m, ບ້ານນາເຫຼັກ, ບ້ານໂພນບົກ, ບ້ານໂພນຕານ ເມືອງ ແລະ ແຂວງສາລະວັນ.

- ອີງຕາມ ກົດໝາຍ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ວ່າດ້ວຍ ການປະມູນຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ.
- ອີງຕາມ ສະບັບເລກທີ 72 /ສພຊ, ນະຄອນຫຼວງວຽງຈັນ ລົງວັນທີ 15 ທັນວາ 2015 ກົດໝາຍວ່າດ້ວຍ ການລົງທຶນຂອງລັດ (ສະບັບປັບປຸງ).
- ອີງຕາມ ຂໍ້ຕົກລົງ ຂອງເຈົ້າເມືອງ ສະບັບເລກທີ 634/ຈມ, ລົງວັນທີ 30 ກັນຍາ 2024.ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນ ໄຫວ ຂອງຫ້ອງການພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ.
- ອີງຕາມ ແຈ້ງການຂອງຫ້ອງການການເງິນເມືອງສາລະວັນ, ເລກທີ 63/ກງມ.ສວ, ລົງວັນທີ 03/03/ 2026 ກ່ຽວກັບແຈ້ງແຜນການລົງທຶນຂອງລັດ ປະຈຳປີ 2026.

**ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ** ຂໍຖືເປັນກຽດແຈ້ງການມາຍັງທ່ານຊາບວ່າ: ຫາກບໍລິສັດໃດມີຄວາມສົນໃຈ ຕ້ອງການເຂົ້າຮ່ວມການປະມູນ ໂຄງການ ຟື້ນຟູ ສ້ອມແປງທາງດິນແດງປະສົມຫີນທາດ ຈຳນວນລວງຍາວ 8.47 Km, ກ້ວາງ 5 m, 6m, ບ້ານນາເຫຼັກ, ບ້ານໂພນບົກ, ບ້ານໂພນຕານ ເມືອງ ແລະ ແຂວງສາລະວັນ ເພື່ອຮັບເໝົາກໍ່ສ້າງ ເຊິ່ງຜູ້ສົນໃຈ ຕ້ອງມີໃບດຳ ເນີນທຸລະກິດ ດ້ານການກໍ່ສ້າງ ຂົວທາງ ຄົບຖ້ວນ ຕາມລະບຽບກົດໝາຍ ສ່ວນການຊຳລະສະສາງແມ່ນຕາມສົກງົບປະມານທີ່ມີໃນແຕ່ລະປີ, ການເຂົ້າຮ່ວມການປະມູນມີເອກະສານປະກອບລາຍລະອຽດດັ່ງລຸ່ມນີ້.

1. ໂຄງການ ຟື້ນຟູ ສ້ອມແປງທາງດິນແດງປະສົມຫີນທາດ ຈຳນວນລວງຍາວ 8.47 Km, ກ້ວາງ 5 m, 6m, ບ້ານນາເຫຼັກ, ບ້ານໂພນບົກ, ບ້ານໂພນຕານ ເມືອງ ແລະ ແຂວງສາລະວັນ ເວລາການກໍ່ສ້າງ ແມ່ນ 24 ເດືອນ, ເລີ່ມລົງມືກໍ່ສ້າງນັບແຕ່ມື້ເຊັນສັນຍາ ເປັນຕົ້ນໄປ.
2. ເອກະສານປະມູນສາມາດສະເໜີຊື້ ທີ່ຫ້ອງການ ພັດທະນາ ແລະ ບໍລິຫານຕົວເມືອງສາລະວັນ ໃນເວລາທາງລັດຖະການ ມີລາຄາ ຊຸດລະ 1,000,000 ກີບ ການປະມູນ ມີໄລຍະເວລາ ພຽງ 1 ວັນ.

สแกนด้วย CamScanner

3. ກອງປະຊຸມການປະມູນຈະໄດ້ຈັດຂຶ້ນ ເວລາ 8:30ໃນວັນທີ 10/04/2026 ທີ່ຫ້ອງປະຊຸມຫ້ອງການ ພັດທະນາ ແລະ ບໍລິການຕົວເມືອງສາລະວັນ.

<u>ໝາຍເຫດ:</u> ເອກະສານປະກອບໃນການປະມູນມີດັ່ງນີ້.

1. ໃບສະເໜີຂໍອະນຸຍາດຈັດຕັ້ງປະຕິບັດໂຄງການ(ໃບເຈດຈຳນົງ)ແບບຟອມຍື່ນປະມູນ ຈຳນວນ 01 ໃບ.
2. ໃບຄິດໄລ່ລາຄາແຜ່ນຜັງການກໍ່ສ້າງຄົບຊຸດ ຈຳນວນ 01 ຊຸດ.
3. ໃບທະບຽນວິສາຫະກິດ (ຈາກ ພະແນກ ການຄ້າແຂວງ) ຈຳນວນ 01 ໃບ.
4. ໃບໄລ່ລຽງອາກອນປີ2024ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຈຳນວນ 01 ໃບ.
5. ໃບຢັ້ງຢືນ ຜົນງານຜ່ານມາ ຈຳນວນ 01 ໃບ.
6. ໜັງສືຄ້ຳປະກັນການປະມູນ 2% ຂອງມູນຄ່າເຊັນຢັ້ງຢືນຈາກສະຖາບັນການເງິນ ຈຳນວນ 01 ໃບ.
7. ໃບປະກາດສະນີຍະບັດຂອງພະນັກງານວິຊາການ ຂົວທາງ ຂອງບໍລິສັດ ຈຳນວນ 03 ສຫ.
8. ຕາຕະລາງແຜນປະຕິບັດວຽກ ແລະ ກຳນົດເວລາການກໍ່ສ້າງ ຈຳນວນ 01 ຊຸດ.
9. ໃບຢັ້ງຢືນ ຖານະການເງິນຈາກທະນະຄານ ອາຍຸບໍ່ເກີນ 3 ເດືອນ ຈຳນວນ 01 ໃບ.
10. ໃບອະນຸຍາດ ຂໍສືບຕໍ່ ດຳເນີນທຸລະກິດຈາກຂະແໜງ ຍທຂ ຈຳນວນ 01 ໃບ.
11. ຕ້ອງມີໃບມອບສິດດຳເນີນທຸລະກິດຈາກບໍລິສັດແມ່(ຖ້າໄດ້ຮັບຈາກຜູ້ອື່ນ) ຈຳນວນ 01 ໃບ.
12. ໃບຊີວະປະຫວັດຫຍໍ້ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າຮັບໃບມອບສິດ ຈຳນວນ 01 ຊຸດ.
13. ໃບຢັ້ງຢືນທີ່ຢູ່ຂອງຜູ້ອຳນວຍການບໍລິສັດ ຫຼື ຜູ້ຕາງໜ້າທີ່ໄດ້ຮັບໃບມອບສິດ ຈານວນ 01 ຊຸດ.
14. ເອກະສານອື່ນໆທີ່ກ່ຽວຂ້ອງການເປີດບໍລິສັດ.

ດັ່ງນັ້ນ, ຈິ່ງແຈ້ງການ ມາເຖິງບັນດາບໍລິສັດ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໂຄງການ ດັ່ງກ່າວໃນຄັ້ງນີ້ ຕາມເນື້ອໃນ ແລະ ເງື່ອນໄຂຂ້າງເທິງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ແຂວງສາລະວັນ
ຫ້ອງການ
ພັດທະນາ ແລະ ບໍລິການ
ຕົວເມືອງສາລະວັນ
ເມືອງສາລະວັນ

ບົວພັນ ພົນຈະເລີນ

สแกนด้วย CamScanner